## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 29 ພຶສພາ 2022 (05-29-2022)

---

## ຈົ່ງຕຽມຕົວແລະຕຽມພ້ອມ

*ເມື່ອໃດທີ່ພົບວ່າທ່ານບໍ່ໄດ້ຕຽມຕົວ?*

**ຈຸດສຳຄັນໃນບົດຮຽນ:** ເຕີບໃຫຍ່ຂຶ້ນໃນພຣະຄຣິດ ຂນະທີ່ທ່ານລໍຖ້າການສະເດັດກັບມາຂອງພຣະອົງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ເວລາຂ້າພະເຈົ້າຍັງວັຍໜຸ່ມ, ຂ້າພະເຈົ້າເຮັດການຢູ່ຮ້ານອາຫານໃນມໍ Mall ແຫ່ງນຶ່ງ. ເຈົ້າຂອງຮ້ານມັກຈະປ່ອຍໃຫ້ຄົນໜຸ່ມບໍຣິຫານຮ້ານຕາມລຳພັງໃນເວລາກາງຄືນ. ສິ່ງສຳຄັນທີ່ເພິ່ນບອກແມ່ນໃຫ້ຄົນໃດຄົນນຶ່ງຢູ່ໃກ້ຈັກເກັບເງິນ, ຊຶ່ງຂ້າພະເຈົ້າເຮັດມາດ້ວຍຄວາມສັດຊື່. ຫຼັງຈາກນັ້ນ ພວກເຮົາຮູ້ວ່ານາຍມັກຈະມາຈອບເບິ່ງໂດຍບໍ່ໄດ້ບອກລ່ວງໜ້າ.

ຄືນນຶ່ງມີລູກຄ້າບໍ່ຫຼາຍ ຂ້າພະເຈົ້າເຮັດວຽກກັບຄົນໜຸ່ມອີກສອງຄົນທີ່ພາກັນຫົວສະອຶກສະອ້ອຍຢູ່ດ້ານຫຼັງ. ພວກເຂົາເອີ້ນຂ້າພະເຈົ້າໄປຮ່ວມນຳ, ແຕ່ຂ້າພະເຈົ້າຢືນຢັນບອກພວກເຂົາວ່າບໍ່-ແລະເຂົາກໍຍັງຂູ່ຊີເອີ້ນຂ້າພະເຈົ້າຕໍ່ໄປ. ໃນທີ່ສຸດ, ຂ້າພະເຈົ້າກໍໃຈອ່ອນ ປະໜ້າທີ່ເຝົ້າຈັກລົງທະບຽນແລະໄປທາງຫຼັງ. ບໍ່ກີ່ວິນາທີຕໍ່ມານາຍກໍໄດ້ເຂົ້າມາໃນຮ້ານພໍດີ. ຂ້າພະເຈົ້າກໍຮີບແລ່ນໄປຂ້າງໜ້າຢ່າງວ່ອງໄວ, ແຕ່ ເປັນທີ່ປະຈັກແຈ້ງວ່ານາຍບໍ່ດີໃຈ.

ຂ້າພະເຈົ້າບໍ່ໄດ້ຢູ່ບ່ອນເຮັດວຽກຂອງຂ້າພະເຈົ້າ, ຊຶ່ງໝາຍຄວາມວ່າຂ້າພະເຈົ້າບໍ່ໄດ້ຕຽມຕົວສຳລັບການກັບມາຂອງນາຍ. ທຳນອງດຽວກັນ ອາດເປັນຈິງໃນຊີວິດຝ່າຍວິນຍານຂອງເຮົາ. ພວກເຮົາດຳເນີນຊີວິດຂອງເຮົາເພື່ອວ່າເວລາພຣະຄຣິດກັບມາ, ພວກເຮົາຈະບໍ່ລະອາຍຕໍ່ພຣະພັກພຣະອົງ (1ໂຢຮັນ 2:28). ໃນມັດທາຍບົດ 25, ພຣະເຢຊູໃຊ້ຄຳອຸປມາເພື່ອບອກໃຫ້ເຮົາຮູ້ວ່າເຮົາຄວນຕຽມຕົວຢ່າງໃດ.

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ມັດທາຍ 25:1-5.</u>

*1 "ເມື່ອນັ້ນຣາຊອານາຈັກສວັນຈະປຽບເໝືອນສາວປອດສິບຄົນ ທີ່ຖືໂຄມຂອງຕົນອອກໄປຮັບເຈົ້າບ່າວ. 2 ເປັນຄົນໂງ່ຫ້າຄົນ*
*ແລະຄົນສລາດຫ້າຄົນ. 3 ຝ່າຍຄົນໂງ່ນັ້ນເອົາໂຄມຂອງຕົນໄປ ແຕ່ບໍ່ໄດ້ເອົານ້ຳມັນໄປນຳ. 4 ແຕ່ຄົນສລາດນັ້ນໄດ້ເອົານ້ຳມັນ*
*ໃສ່ກວດກັບທັງໂຄມຂອງຕົນໄປດ້ວຍ. 5 ເມື່ອເຈົ້າບ່າວຍັງຊ້າຢູ່ ເຂົາກໍພາກັນເຫງົານອນແລະຫລັບໄປ.*

ຄຳອຸປມາເຣື່ອງສາວປອດສິບຄົນແມ່ນນຶ່ງໃນຄຳອຸປມາຫຼາຍເຣື່ອງທີ່ພຣະເຢຊູໄດ້ໃຊ້ບັນລະຍາຍວ່າອານາຈັກສວັນຈະເປັນຄືແນວໃດ. (ເບິ່ງມັດທາຍບົດ 13 ດ້ວຍ). ອານາຈັກສວັນເປັນສະຖານທີ່ຂອງສິ່ງຕ່າງໆພາຍໃຕ້ຂ່າວປະເສີດແລະພາຍໃຕ້ການປົກຄອງຂອງພຣະເຈົ້າ. ມັນແມ່ນການປົກຄອງຂອງພຣະເຈົ້າໃນປະຈຸບັນເທິງຊີວິດຂອງຄົນທີ່ຖືກໄຖ່ໄວ້ ຊຶ່ງຈະກາຍເປັນການຮັບຮູ້ຢ່າງຄົບຖ້ວນໃນການປົກຄອງສູງສຸດຂອງພຣະອົງໃນທົ່ວແຜ່ນດິນໂລກ.

ພື້ນຖານວັທນະທັມຂອງຄຳອຸປມານີ້ກ່ຽວຂ້ອງກັບປະເພນີການແຕ່ງງານຂອງຊາວຢິວໃນສະຕະວັດທຳອິດ. ກ່ອນທີ່ຄູ່ບ່າວສາວຈະແຕ່ງງານກັນ, ພວກເຂົາເຈົ້າຈະຕ້ອງຜ່ານຂັ້ນຕອນຂອງການໝັ້ນ. ພວກເຂົາບໍ່ທັນໄດ້ເປັນຄູ່ສົມຣົດ ຢ່າງສົມບູນເທື່ອ, ແຕ່ເຂົາເບິ່ງຄືຄູ່ຜົວເມັຽ. ຫຼັງຈາກປະມານນຶ່ງປີຂອງການເປັນຄູ່ໝັ້ນ, ເຈົ້າບ່າວຈຶ່ງໄປບ້ານເຈົ້າສາວເພື່ອນຳເອົານາງມາເຮືອນ

ຂອງຕົນເພື່ອກິນລ້ຽງສເລີມສລອງລະຍະເຈັດວັນ. ເຈົ້າບ່າວບໍ່ໄດ້ເຮັດສິ່ງນີ້ຜູ້ດຽວ. ລາວໄດ້ຖືກນຳພາໂດຍຂະບວນເຮັດພິທີແຕ່ງງານທີ່ນຳສົ່ງທັງຄູ່ໄປບ້ານເຈົ້າບ່າວ. ໃນຄຳອຸປມາຂອງພຣະເຢຊູ, ງານດອງປະກອບດ້ວຍສາວປອດສິບຄົນ. ສາວປອດເປັນຍິງໜຸ່ມໃນວັຍແຕ່ງງານໄດ້ແລ້ວ. ທີ່ນີ້, ຄຳວ່າ *ປອດ* ບໍ່ໄດ້ໃຊ້ເພື່ອເນັ້ນຄວາມບໍຣິສຸດຂອງເຂົາ ຫຼືເນັ້ນປະສົບການດ້ານເພດສັມພັນຫຼາຍປານໃດ ແຕ່ໄດ້ເນັ້ນເຖິງຄວາມສັມພັນຕໍ່ເຈົ້າສາວ.

*ທ່ານຈະອະທິບາຍຄົນທີ່ຕຽມພ້ອມສຳລັບການສະເດັດກັບມາຄັ້ງທີສອງຂອງພຣະຄຣິດຢ່າງໃດ?*

ຈຸດສູນກາງຄຳອຸປມາຂອງພຣະເຢຊູຮວມມີໂຄມໄຟ. ຄວາມຮັບຜິດຊອບສ່ວນນຶ່ງຂອງພວກເຈົ້າສາວລອງແມ່ນໄຕ້ໄຟເພື່ອເຍືອງທາງໃຫ້ແກ່ຂະບວນແຫ່. ເພື່ອຮັກສາໂຄມໄຟໃຫ້ລຸກ, ແຕ່ລະຄົນຕ້ອງການນ້ຳມັນສຳລັບຖ່ຽນ. ເນື່ອງຈາກວ່າພິທີໄດ້ຈັດຂຶ້ນໃນຕອນແລງ, ຄົນຈະຕ້ອງຮູ້ວ່າທ່ານຕ້ອງຖືນ້ຳມັນເພີ້ມເພື່ອ ສຳລັບໂຄມໄຟຂອງທ່ານ.

ເຈົ້າສາວລອງໃນຄຳອຸປມາຂອງພຣະເຢຊູແບ່ງເປັນສອງກຸ່ມ, ແລະພວກເຂົາຢູ່ກຸ່ມໃດກໍຂຶ້ນກັບລະດັບການຕຽມຕົວຂອງພວກເຂົາ. ລະດັບການຕຽມຕົວຂອງພວກເຂົາໄດ້ຖືກຈັດເປັນພວກ “ສລາດ” ຫຼື ພວກ “ໂງ່”.

ພວກສາວປອດໂງ່ເບິ່ງຄືວ່າຢາກໄປງານດອງແທ້ໆ, ແຕ່ ເຂົາບໍ່ໄດ້ເຄົາຣົບເຈົ້າບ່າວພຽງພໍ ທີ່ຈະຄິດເຖິງການຕຽມຕົວທີ່ຈຳເປັນລວມຢູ່ດ້ວຍ. ອີກດ້ານນຶ່ງ, ສາວປອດສລາດສະແດງວ່າຊີວິດຄວາມເຊື່ອຄວນເປັນແນວໃດ. ເຂົາມີອຸປນິສັຍກົງກັນຂ້າມກັບສາວປອດໂງ່ ໃນນັ້ນເຂົາຄິດໄດ້ລ່ວງໜ້າຢ່າງຊັດເຈນ.

ພຣະເຢຊູເລົ່າຄຳອຸປມານີ້ໃນສະພາບການໃນຄຳສອນຂອງພຣະອົງກ່ຽວກັບການກັບມາຄັ້ງທີສອງຂອງພຣະອົງ, ເພື່ອວ່າພວກເຮົາຈະໄດ້ເຫັນວ່າເຈົ້າບ່າວເປັນຕົວແທນພຣະຄຣິດ. ສາວປອດສລາດສະທ້ອນເຖິງຜູ້ເຊື່ອແທ້. ສາວປອດໂງ່ສະທ້ອນເຖິງພວກທີ່ອາດໄດ້ປະກາດເຊື່ອໃນພຣະເຢຊູ, ແຕ່ເຂົາບໍ່ໄດ້ຕຽມຕົວເພື່ອຊີວິດບັ້ນປາຍດ້ວຍການສແວງຫາຄວາມສັມພັນອັນແທ້ຈິງກັບພຣະຄຣິດ.

ການ “ປັ່ນປ່ວນ”ໃນຄຳອຸປມາຂອງພຣະເຢຊູເກີດຂຶ້ນ “ເມື່ອເຈົ້າບ່າວຊັກຊ້າຢູ່.” ນີ້ອາດເລັງເຖິງການຍືດເຍື້ອຂອງປວັດສາດຣະຫວ່າງການສະເດັດມາຄັ້ງທີນຶ່ງແລະການສະເດັດກັບມາຂອງພຣະອົງ. ພຣະຄຣິດຢາກໃຫ້ຜູ້ຕິດຕາມພຣະອົງຄອຍຖ້າຢ່າງອົດທົນຕໍ່ການສະເດັດກັບມາຂອງພຣະອົງ ແຕ່ໃຫ້ຕຽມຕົວພ້ອມສຳລັບສິ່ງທີ່ບໍ່ຄາດຄິດ.

ການຊັກຊ້າຂອງເຈົ້າບ່າວພາໃຫ້ພວກເຈົ້າສາວລອງເຫງົານອນ. ພວກເຮົາບໍ່ຄວນອ່ານລາຍລະອຽດນີ້ດ້ວຍຄວາມໝາຍໃນທາງລົບ. ພຣະເຢຊູບໍ່ໄດ້ກ່າວໂທດການເຫງົານອນຂອງເຂົາ. ຕອນນັ້ນ, ມັນກໍເປັນກາງຄືນແລ້ວ. ຄວາມຈິງ, ພວກສາວປອດສລາດສາມາດພັກຜ່ອນເພາະວ່າພວກເຂົາຕຽມພ້ອມຄົບຖ້ວນແລ້ວ. ມັນຄວນແມ່ນສາວປອດໂງ່ທີ່ບໍ່ສົມຄວນນອນຈົນກວ່າເຂົາຕຽມພ້ອມທຸກສິ່ງ.

## 2. <u>ມັດທາຍ 25:6-9.</u>

*6 ຄັນເວລາທ່ຽງຄືນກໍມີສຽງຮ້ອງມາວ່າ ‘ເບິ່ງແມ, ເຈົ້າບ່າວມາແລ້ວ ຈົ່ງອອກມາຮັບເພິ່ນສາ’. 7 ພວກສາວປອດທຸກຄົນກໍຕື່ນຂຶ້ນ*
*ຈັດແຈງໂຄມຂອງຕົນ. 8 ພວກໂງ່ນັ້ນຈຶ່ງເວົ້າກັບພວກສລາດວ່າ ‘ຈົ່ງປັນນ້ຳມັນຂອງເຈົ້າໃຫ້ພວກເຮົາແດ່ເພາະວ່າໂຄມຂອງ*
*ເຮົາກຳລັງຈະມອດ. 9 ຝ່າຍພວກສລ າດຈຶ່ງຕອບວ່າ ‘ໜ້າຢ້ານວ່ານ້ຳມັນຈະບໍ່ພໍສຳ-*
*ລັບເຮົາແລະເຈົ້າຈົ່ງໄປຫາຜູ້ຂາຍແລ້ວຊື້ເອົາ*
*ສຳລັບຕົນກໍດີກວ່າ.’*

“ໃນເວລາທ່ຽງຄືນ,” ຄົນສ່ວນໃຫຍ່ມັກນອນຫຼັບແຈບ. ໃນເມື່ອເຈົ້າບ່າວມາເດິກ, ເປັນໂມງທີ່ບໍ່ຄາດຄິດ, ມັນຊ່ອຍເສີມໃຫ້ຫຼັກຄຳສອນວ່າ ການກັບມາຂອງພຣະຄຣິດຈະປະຫຼາດໃຈ. ເຈົ້າສາວທັງສິບຄົນຖືກເອີ້ນອອກມາພົບເຈົ້າບ່າວ. ສາວປອດໂງ່

ຮູ້ເມື່ອວ່າເຂົາບໍ່ໄດ້ຕຽມພຽງພໍໃນເວລານີ້. ຫຼັງຈາກເຂົາ “ຈັດຕຽມເອົາໂຄມໄຟ” ແລ້ວເຂົາຕ້ອງໄດ້ເຕີມນ້ຳມັນເພື່ອໃຫ້ມັນຮຸ່ງ.

ມັນເປັນເຣື່ອງໜ້າເສັຍດາຍທີ່ສາວປອດໂງ່ຮູ້ວ່າເຂົາບໍ່ມີນ້ຳມັນເຫຼືອພໍ. ເຂົາບໍ່ໄດ້ເອົາໃຈໃສ່ບາດກ້າວທີ່ຈຳເປັນພຽງພໍເພື່ອຫຼີກເວັ້ນຄວາມບົກພ່ອງຂອງເຂົາ. ບໍ່ມີເຫດຜົນສະເພາະຂອງການເມີນເສີຍ, ແຕ່ ການເມີນເສີຍໃນເຫດການນີ້ແມ່ນຄວາມໂງ່. ບັດນີ້ເຂົາໝົດເວລາແລ້ວ; ມັນສວາຍເກີນໄປທີ່ຈະຕຽມຕົວ. ເຖິງແມ່ນວ່າ, ສາວປອດໂງ່ພະຍາຍາມໄຕ້ໂຄມໄຟແຕ່ບໍ່ສຳເຣັດ. ໄສ້ໂຄມໄຟກໍຈະຮ້ອຍທັນທີຫຼັງຈາກໄຕ້. ທ່ານສາມາດຮູ້ສຶກເຖິງຄວາມຕື່ນຕົກໃຈເມື່ອເຈົ້າສາວໂງ່ເລີ້ມຂໍຮ້ອງສາວປອດສລາດວ່າ,*“ຈົ່ງປັນນ້ຳມັນຂອງເຈົ້າໃຫ້ພວກເຮົາແດ່ເພາະວ່າໂຄມຂອງເຮົາກຳລັງຈະມອດ.”* ເປັນທີ່ເຂົ້າໃຈວ່າ, ສາວປອດສລາດໄດ້ເອົານ້ຳມັນມາພໍສຳລັບໂຄມໄຟເຂົາເທົ່ານັ້ນ, ແຕ່ເຂົາບໍ່ມີເຫຼືອພໍແບ່ງປັນ. ການຕຽມພ້ອມເພື່ອຕ້ອນຮັບພຣະຄຣິດເມື່ອພຣະອົງສະເດັດກັບມາເປັນເຣື່ອງຂອງແຕ່ລະຄົນ. ການຕຽມຕົວນັ້ນບໍ່ສາມາດໂອນຫຼືແບ່ງໃຫ້ຜູ້ອື່ນໄດ້. ພໍ່ແມ່ເຮັດດີທີ່ສຸດເພື່ອຕຽມລູກຂອງພວກເຂົາສຳລັບວັຍຜູ້ໃຫຍ່. ພວກເພິ່ນຊ່ອຍເຂົາ, ຈັດຫາໃຫ້ເຂົາ, ສອນເຂົາ, ແລະຊູໃຈເຂົາ-ແຕ່ພວກເພິ່ນບໍ່ສາມາດດຳເນີນຊີວິດເພື່ອເຂົາ. ພວກເຮົາບໍ່ສາມາດຕັດສິນໃຈເພື່ອເຂົາ.

ຂາດການຕຽມພ້ອມດ້ານຈິດວິນຍານຈະມີຜົນຕາມສນອງຕລອດໄປເປັນນິດ. ຄົນພະຍາຍາມຕຽມສິ່ງອື່ນເໜືອຊີວິດຝ່າຍວິນຍານຂອງເຂົາ. ຫຼາຍຄົນຕຽມສຳລັບການງານ, ການເງິນ, ແລະຄວາມສັມພັນໄດ້ດີ, ແຕ່ເຂົາບໍ່ສົນໃຈນຳສິ່ງຝ່າຍວິນຍານ. ມັນເປັນການຕອບຮັບຂອງແຕ່ລະຄົນຕໍ່ການຮຽກເອີ້ນຂອງພຣະຄຣິດຊຶ່ງຈະຊີ້ບອກເຖິງອານາຄົດນິຣັນຂອງເຂົາ. ບໍ່ມີໃຜມີໂອກາດຄັ້ງທີສອງຫຼັງຈາກພຣະເຢຊູສະເດັດກັບມາ (ຫຼືຄົນຜູ້ນັ້ນຕາຍ). ເວລານັ້ນແມ່ນດຽວນີ້.

*ແມ່ນຫຍັງເປັນສາເຫດໃຫ້ຄົນບໍ່ຕຽມພ້ອມສຳລັບການສະເດັດກັບມາຂອງພຣະຄຣິດ?*

## 3. <u>ມັດທາຍ 25:10-13.</u>

*10 ເມື່ອເຂົາກຳລັງໄປນັ້ນ ເຈົ້າບ່າວກໍມາເຖິງ ແລະຜູ້ທີ່ພ້ອມຢູ່ແລ້ວກໍເຂົ້າໄປນຳເຈົ້າບ່າວໃນການລ້ຽງເນື່ອງໃນງານສົມລົດແລ້ວ*
*ປະຕູກໍອັດເສັຽ. 11 ຫລັງຈາກນັ້ນຍິງສາວປອດພວກອື່ນນັ້ນມາຮ້ອງວ່າ ‘ນາຍເອີຍ, ນາຍເອີຍ ຂໍໄຂປະຕູໃຫ້ໝູ່ຂ້ານ້ອຍແດ່.’*
*12 ແຕ່ເພິ່ນໄດ້ຕອບວ່າ ‘ເຮົາບອກທ່ານທັງຫຼາຍຕາມຄວາມຈິງວ່າ ເຮົາບໍ່ຮູ້ຈັກພວກທ່ານ.’ 13 ເຫດສັນນັ້ນຈົ່ງເຝົ້າລະວັງຢູ່ເພາະ*
*ທ່ານທັງຫຼາຍບໍ່ຮູ້ຈັກວັນຫລືໂມງນັ້ນ.”*

ທຸກຄົນໃຜກໍມັກເຣື່ອງທີ່ຈົບຢ່າງສນຸກສນານ. ໜ້າເສັຽດາຍ, ຄຳອຸປມານີ້ຈົບລົງຢ່າງກະທັນຫັນແລະເສົ້າ. ເວລາສາວປອດໂງ່ຈາກໄປເພື່ອຊື້ນ້ຳມັນເພີ້ມ, “ເຈົ້າບ່າວກໍມາຮອດ.” ປະຕູກໍປິດຕັນແມ້ກະທັ້ງເຈົ້າສາວຜູ້ທີ່ເປັນສ່ວນນຶ່ງຂອງງານດອງຕັ້ງແຕ່ຕົ້ນຍ້ອນຂາດການຕຽມພ້ອມ ຊຶ່ງເປັນການດູໝິ່ນທັງເຈົ້າສາວ ແລະເຈົ້າບ່າວຢ່າງຮ້າຍແຮງ. ສາວປອດລ້ວນແຕ່ແມ່ນເພື່ອນຂອງຄອບຄົວ ຜູ້ໄດ້ຮັບກຽດໂດຍມີໂອກາດຮັບໃຊ້ໃນງານດອງ. ບັນຫາແມ່ນສາວປອດໂງ່ຫ້າຄົນນັ້ນບໍ່ໄດ້ໃຫ້ກຽດຄືນ.

*ມີຜົນສະທ້ອນຫຍັງແດ່ຕໍ່ການເລື່ອນການຕຽມພ້ອມໃນການສະເດັດມາຂອງພຣະຄຣິດ?*

ພາບປະຕູອັດ ຜູ້ບໍ່ເຊື່ອຖືກອັດປະຈາກອານາຈັກຂອງພຣະເຈົ້າ. ມີຫຼາຍຄົນສົມມຸດເອົາວ່າຖ້າຕົວເອງບໍ່ເປັນຄົນຊົ່ວເກີນໄປ, ກໍຈະຂຶ້ນສວັນເວລາຕາຍໄປ. ການສົມມຸດຂອງເຂົາແມ່ນວ່າຄົນສ່ວນຫຼາຍຈະໄດ້ເຂົ້າໄປໃນສວັນ, ແຕ່ພຣະຄັມພີເວົ້າແຈ່ມແຈ້ງ: ພວກທີ່ບໍ່ຮູ້ຈັກພຣະຄຣິດຈະບໍ່ໄດ້ເຂົ້າໄປໃນສວັນ. ຂນະທີ່ສາວປອດໂງ່ຂໍເຂົ້າປະຕູເຂົາຮ້ອງວ່າ, “ນາຍເອີຍ ນາຍເອີຍ.” ນີ້ແມ່ນການບັງຄັບຄວາມພະຍາຍາມເພື່ອສະແດງໃຫ້ເຫັນຄວາມໃກ້ຊິດທີ່ບໍ່ປາກົດມີ. ບາງເທື່ອເຮົາໃຊ້ຄຳເວົ້າເພື່ອໝາຍເຖິງຄວາມເລິກເຊິ່ງຂອງຄວາມສັມພັນທີ່ບໍ່ມີຢູ່ຈິງ.

ສາວປອດໂງ່ຖືກປະຕິເສດການເຂົ້າໄປຢ່າງແຂງແຮງ. ເຈົ້າບ່າວກຳລັງຈະເວົ້າບາງຢ່າງທີ່ບໍ່ຂຶ້ນກັບການເຈລະຈາ. ສິ່ງທີ່ບໍ່ສາມາດຕໍ່ລອງໄດ້ແມ່ນຄວາມເປັນຈິງຂອງຄວາມສັມພັນຂອງເຈົ້າບ່າວກັບສາວປອດໂງ່ຫ້າຄົນນັ້ນ: “ເຮົາບໍ່ຮູ້ຈັກພວກທ່ານ!”

ໃນເມື່ອເວລາເຂົ້າໄປໄດ້ກາຍໄປແລ້ວ, ເຈົ້ານາຍຈະບໍ່ປຸ່ງນໃຈ. ເມື່ອພຣະເຢຊູສະເດັດກັບມາ (ຫຼືພວກເຮົາປະສົບຄວາມຕາຍຝ່າຍຮ່າງກາຍ), ພວກເຮົາບໍ່ມີນາທີສຸດທ້າຍ ເພື່ອພະຍາຍາມເຮັດສິ່ງໃດໃຫ້ຖືກຕ້ອງກັບພຣະເຈົ້າ. ເຖິງຢ່າງໃດກໍຕາມ, ຄຣິສຕຽນຕ້ອງຕື່ນຕົວຢູ່ສເມີແລະເຝົ້າລະວັງຢູ່ຕລອດ. ຂໍໃຫ້ເຮົາເດີນໄປກັບພຣະອົງຕຽມພ້ອມຢ່າງເຕັມທີ ແລະເຝົ້າເບິ່ງການສະເດັດກັບມາຂອງພຣະອົງຜູ້ທີ່ຮັກເຮົາ.

*ພວກເຮົາສາມາດເຮັດຫຍັງເພື່ອເພີ້ມຄວາມຮີບຮ້ອນຂອງພວກເຮົາຂນະທີ່ລໍຖ້າການກັບມາຂອງພຣະຄຣິດ?*

## ນຳໃຊ້ໃນຊີວິດ

ພວກເຮົາຕ້ອງເຕີບໃຫຍ່ຂຶ້ນໃນພຣະຄຣິດຂນະທີ່ພວກເຮົາລໍຖ້າການສະເດັດກັບມາຂອງພຣະອົງ. ເລືອກນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງກວດເບິ່ງຄວາມພົ້ນຂອງທ່ານ.** ຈົ່ງຄິດກ່ຽວກັບປະສົບການຄວາມພົ້ນຂອງທ່ານ. ທ່ານໝັ້ນໃຈບໍ່ວ່າທ່ານຮູ້ຈັກພຣະເຈົ້າເປັນການສ່ວນຕົວ? ທ່ານເຊື່ອໃນສິ່ງໃດເພື່ອຄວາມພົ້ນຂອງທ່ານ? ຈົ່ງອ່ານດ້ວຍໃຈອະທິຖານໃນ 2 ໂກຣິນໂທ 13:5 ຂນະທີ່ທ່ານພິຈາຣະນາຖ້າວ່າທ່ານມີຄວາມສັມພັນກັບພຣະຄຣິດແທ້.
- **ຈົ່ງຣະວັງ.** ຄວບຄຸມຄວາມຄິດຂອງທ່ານເພື່ອຍອມຮັບວ່າພຣະເຈົ້າຮູ້ອານາຄົດຂອງທ່ານ...ແລະຄວາມຮູ້ຂອງພຣະອົງນັ້ນກໍພຽງພໍແລ້ວ ຢ່າຟັງຜູ້ໃດທີ່ຈະພາທ່ານຫຼົງໄປໃນທາງຜິດ.
- **ເສີມສ້າງຄວາມເຊື່ອຂອງທ່ານໃຫ້ເຂັ້ມແຂງຂຶ້ນ.** ຈົ່ງແນໃສ່ບ່ອນໃດໃນຊີວິດຝ່າຍວິນຍານຂອງທ່ານເອງທີ່ຕ້ອງການຣະມັດຣະວັງຕື່ມ. ບາງທີມັນເປັນຊີວິດການອະທິຖານທີ່ອ່ອນເພັຽ. ອາດຈະເປັນຍ້ອນຄວາມຢ້ານກົວໃນການແບ່ງປັນຂ່າວປະເສີດ. ອາດຈະເປັນສິ່ງໃດກໍຕາມສຳລັບທ່ານ, ຈົ່ງຕຽມພ້ອມທີ່ຈະເຕີບໂຕໃນສິ່ງນັ້ນໃນມື້ຕໍ່ໄປໂດຍການອະທິຖານສະເພາະເຈາະຈົງສຳລັບຜ່ານຜ່າໄປໃຫ້ໄດ້. ຂໍຮ້ອງພຣະເຈົ້າສອນທ່ານໃຫ້ຮູ້ຈັກເວົ້າວ່າ "ບໍ່" ຕໍ່ຄວາມບາບນັ້ນ ແລະ "ໂດຍ" ຕໍ່ພຣະອົງ.

ທີ່ທ່ານຖືກຈັບໄດ້ຕອນທີ່ເຜີຕົວໂດຍເຈົ້ານາຍຝ່າຍໂລກຂອງທ່ານ ມັນກໍເປັນເຣື່ອງນຶ່ງ, ແຕ່ວ່າມັນເປັນເຣື່ອງອື່ນອີກເມື່ອພວກເຮົາເວົ້າກ່ຽວກັບພຣະຜູ້ເປັນເຈົ້າແຫ່ງຈັກກະວານ. ໃຫ້ພວກເຮົາຕຽມພ້ອມຂນະທີ່ເຮົາລໍຖ້າການສະເດັດກັບມາຂອງພຣະຄຣິດ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**